ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 4793 /ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 09 OCT 2026

ໜັງສືລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,
ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ,
ບັນດາທ່ານຜູ້ຖືຮຸ້ນຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງມະຕິທີ່ສຳຄັນ ການຕົກລົງເຫັນດີຂອງສະພາບໍລິຫານ ຜ-ຟຟລ ຄັ້ງວັນທີ 09 ຕຸລາ 2026.

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງສະພາບໍລິຫານ ຄັ້ງວັນທີ 09 ຕຸລາ 2026 ມີລາຍລະອຽດລຸ່ມນີ້:

1. ກຳນົດວັນ-ເວລາ, ສະຖານທີ່ ແລະ ກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 01/2026 ດັ່ງນີ້:
   1) **ວັນ-ເວລາຈັດກອງປະຊຸມ:** ວັນພະຫັດ, ວັນທີ **19 ພະຈິກ 2026**, ເວລາ 13:00 - 14:00 ໂມງ ຜູ້ຖືຮຸ້ນລົງທະບຽນ, ເວລາ 14:00 - 15:00 ໂມງ ດຳເນີນກອງປະຊຸມ, ເຊິ່ງຈະຈັດຂຶ້ນເປັນ 02 ລະບົບຄື: ລະບົບແບບຊ່ອງໜ້າ ແລະ ລະບົບແບບອອນລາຍ.
   2) **ສະຖານທີ່:** ຫ້ອງປະຊຸມຊັ້ນ 01 ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ.
   3) **ວັນປິດປຶ້ມບັນຊີຜູ້ຖືຮຸ້ນ:** ວັນທີ **23 ຕຸລາ 2026** ເພື່ອກຳນົດສິດຂອງຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມ.
2. ມອບອຳນາດໃຫ້ທ່ານຜູ້ອຳນວຍການໃຫຍ່ ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດພາຍໃຕ້ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໃນການກຳນົດລາຍລະອຽດ, ເງື່ອນໄຂຕ່າງໆທີ່ຈຳເປັນກ່ຽວກັບການກະກຽມເປີດກອງປະຊຸມ, ການແກ້ໄຂວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ, ວັນ-ເວລາ, ສະຖານທີ່ ລວມທັງການດຳເນີນການໃດໜຶ່ງທີ່ຈຳເປັນ, ການກະກຽມເອກະສານຕ່າງໆ ແລະ ດຳເນີນການໃຫ້ຖືກຕ້ອງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງໃນການຈັດກອງປະຊຸມຜູ້ຖືຮຸ້ນ ສະໄໝວິສາມັນຄັ້ງທີ 01/2026, ສຳລັບວາລະກອງປະຊຸມຜູ້ຖືຮຸ້ນ ແມ່ນຈະແຈ້ງໃຫ້ທ່ານຊາບໃນໜັງສືແຈ້ງເຊີນ.
3. ກຳນົດຜູ້ຕາງໜ້າຜູ້ຖືຮຸ້ນໃນການຮັບໃບມອບສັນທະຄື: ແຕ່ງຕັ້ງ ທ່ານ ສຈ. ປອ. ພູເພັດ ກ້ຽວພິລາວົງ ແລະ ທ່ານ ພັນ ປານີ ສິດທິລາດ ທີ່ເປັນກຳມະການອິດສະຫຼະ ເປັນຜູ້ມອບຮັບສັນທະຈາກຜູ້ຖືຮຸ້ນ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ຮຽນມາດ້ວຍຄວາມນັບຖື,

ປະທານສະພາບໍລິຫານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ສຸລິວັດ ສຸວັນນະຈຸມຄຳ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ຕູ້ ປ. ນ. 2392, ໂທລະສັບ: (856-21) 316 142, ອີເມລ: edlgenhq@edlgen.com.la, ເວັບໄຊທ: www.edlgen.com.la